ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ /ສພຊ

ນະຄອນຫຼວງວຽງຈັນ, ວັນທີ

(ຮ່າງ)

# ກົດໝາຍວ່າດ້ວຍ
# ການຊົດເຊີຍຄ່າເສຍຫາຍຈາກລັດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຊົດເຊີຍຄ່າເສຍຫາຍຈາກລັດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ຮັບປະກັນໃຫ້ຜູ້ຖືກເສຍຫາຍ ໄດ້ຮັບການຊົດເຊີຍຄ່າເສຍ ຫາຍຈາກລັດ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ແລະ ການຈັດຕັ້ງ, ປົກປ້ອງຜົນປະໂຫຍດຂອງລັດ, ຍົກສູງຄວາມຮັບຜິດຊອບຂອງພະນັກງານ ຫຼື ເຈົ້າໜ້າທີ່ຂອງລັດ ໃນການປະຕິບັດໜ້າທີ່ຂອງຕົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຊົດເຊີຍຄ່າເສຍຫາຍຈາກລັດ**

ການຊົດເຊີຍຄ່າເສຍຫາຍຈາກລັດ ແມ່ນ ການທົດແທນຄືນ ຄວາມເສຍຫາຍ ທາງດ້ານວັດຖຸ ແລະ ຈິດ ໃຈ ຂອງຜູ້ຖືກເສຍຫາຍ ຈາກອົງການຈັດຕັ້ງຂອງລັດ ຍ້ອນການປະຕິບັດໜ້າທີ່ຂອງຜູ້ປະຕິບັດໜ້າທີ່.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ປະຕິບັດໜ້າທີ່** ໝາຍເຖິງ ບຸກຄົນ ທີ່ຖືກເລືອກຕັ້ງ, ຮັບຮອງ, ບັນຈຸ ຫຼື ແຕ່ງຕັ້ງເຂົ້າໃນຕຳແໜ່ງໃດໜຶ່ງໃນອົງການຈັດຕັ້ງຂອງລັດ ເພື່ອປະຕິບັດໜ້າທີ່ໃນການຄຸ້ມຄອງບໍລິຫານລັດ, ດຳເນີນຄະດີ ຫຼື ຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫຼື ບຸກຄົນໃດໜຶ່ງ ທີ່ຖືກມອບໝາຍຈາກອົງການຈັດຕັ້ງລັດທີ່ມີສິດອຳນາດ ເພື່ອປະຕິບັດໜ້າທີ່ ທີ່ກ່ຽວກັບການຄຸ້ມຄອງບໍລິຫານລັດ, ການດຳເນີນຄະດີ ຫຼື ການປະຕິບັດຄຳຕັດສິນຂອງສານ;

2. **ຜູ້ຖືກເສຍຫາຍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຄວາມເສຍຫາຍ ທາງດ້ານວັດຖຸ ແລະ/ຫຼື ຈິດໃຈ ທີ່ເກີດຈາກການປະຕິບັດໜ້າທີ່ຂອງພະນັກງານ ຫຼື ເຈົ້າໜ້າທີ່ຂອງລັດ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

3. **ຄວາມເສຍຫາຍທາງດ້ານວັດຖຸ** ໝາຍເຖິງ ຄວາມເສຍຫາຍທາງດ້ານຊັບສິນ ຊຶ່ງປະກອບດ້ວຍ ຄວາມເສຍຫາຍທີ່ເປັນລາຍຮັບແທ້ຈິງ ທີ່ສູນເສຍ ຫຼື ຫຼຸດລົງ, ຄວາມເສຍຫາຍທີ່ເກີດຈາກຄ່າໃຊ້ຈ່າຍໃນການປິ່ນປົວ, ການສົ່ງເສີມສຸຂະພາບ, ຄ່າໃຊ້ຈ່າຍສໍາລັບຜູ້ເບິ່ງແຍງຜູ້ຖືກເຄາະຮ້າຍ, ຄ່າຊາປານະກິດສົບ, ເງິນບໍານານຂອງຜູ້ຖືກເຄາະຮ້າຍກ່ອນເສຍຊີວິດ, ຄ່າໃຊ້ຈ່າຍໃນການເດີນທາງ, ຄ່າພັກເຊົາຂອງຜູ້ມາຢ້ຽມຢາມຜູ້ຖືກຫາ ຫຼື ນັກໂທດ, ຄ່າທໍານຽມ, ຄ່າ ພິມເອກະສານ, ຄ່າສົ່ງຈົດໝາຍ;

4. **ຄວາມເສຍຫາຍທາງຈິດໃຈ** ໝາຍເຖິງ ຄວາມເສຍຫາຍທີ່ເກີດຈາກ ການປະຕິບັດມາດຕະການທາງດ້ານບໍລິຫານ ຊຶ່ງແຕະຕ້ອງທາງດ້ານຈິດໃຈຂອງປະຊາຊົນພາຍໃນຊຸມຊົນ, ການຖືກກັກຂັງຊົ່ວຄາວຕາມຂັ້ນຕອນການບໍລິຫານ, ຜູ້ຖືກເຄາະຮ້າຍ ຖືກດໍາເນີນຄະດີ, ເສຍຊີວິດ, ຖືກລົງວິໄນ ຫຼື ໃຫ້ອອກການ ຢ່າງຜິດກົດໝາຍ;

5. **ອົງການຊົດເຊີຍຄ່າເສຍຫາຍ** ໝາຍເຖິງ ອົງການທີ່ຄຸ້ມຄອງໂດຍກົງຜູ້ປະຕິບັດໜ້າທີ່ ທີ່ລະເມີດກົດໝາຍ ຊຶ່ງພາໃຫ້ເກີດຄວາມເສຍຫາຍ ຫຼື ອົງການຈັດຕັ້ງອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;

6. **ອົງການດໍາເນີນຄະດີ** ໝາຍເຖິງ ອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານ ລວມທັງອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການຊົດເຊີຍຄ່າເສຍຫາຍຈາກລັດ**

ລັດ ຖືສໍາຄັນວຽກງານຊົດເຊີຍຄ່າເສຍຫາຍຈາກລັດ ດ້ວຍການ ວາງນະໂຍບາຍ, ກົດໝາຍ ແລະ ລະບຽບການ, ສະໜອງງົບປະມານ, ປະກອບບຸກຄະລາກອນ, ອຸປະກອນ, ພາຫະນະ ໃຫ້ແກ່ວຽກງານດັ່ງກ່າວ ໄດ້ເຄື່ອນໄຫວຢ່າງມີປະສິດທິພາບ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຊົດເຊີຍຄ່າເສຍຫາຍຈາກລັດ**

ວຽກງານຊົດເຊີຍຄ່າເສຍຫາຍຈາກລັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ລັດຖະທໍາມະນູນ ແລະ ກົດໝາຍ;
2. ຮັບປະກັນສິດ ແລະ ພັນທະພື້ນຖານຂອງພົນລະເມືອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງ ປະຊາຊົນ;
3. ມີຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ ແລະ ຍຸຕິທໍາ;
4. ຮັບປະກັນຂໍ້ມູນທີ່ເຊື່ອຖືໄດ້, ຊັດເຈນ, ມີລັກສະນະວິທະຍາສາດ, ສາມາດກວດກາ ແລະ ຢັ້ງຢືນໄດ້;
5. ຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ເກີດຂຶ້ນ.

**ມາດຕາ 6 ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບການຊົດເຊີຍຄ່າເສຍຫາຍຈາກລັດ ຍ້ອນການປະຕິບັດໜ້າທີ່ຂອງຜູ້ປະຕິ ບັດໜ້າທີ່ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບວຽກງານຊົດເຊີຍຄ່າເສຍຫາຍຈາກລັດ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ຊົດເຊີຍຄ່າເສຍຫາຍຈາກລັດ ດ້ວຍການແລກປ່ຽນບົດຮຽນ, ປະສົບການ, ຍົກລະດັບທາງດ້ານວິຊາການ ໃຫ້ພະນັກງານເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ.

# ພາກທີ II

# ການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ

## ໝວດທີ 1

## ຂອບເຂດການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ

**ມາດຕາ 8 ຂອບເຂດການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ**

ລັດ ຈະຊົດເຊີຍຄ່າເສຍຫາຍ ທີ່ເກີດຈາກການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍ ຂອງຜູ້ປະຕິບັດໜ້າທີ່ ກ່ຽວກັບການຄຸ້ມຄອງບໍລິຫານລັດ ໃນກໍລະນີ ດັ່ງນີ້:

1. ການຕົກລົງກ່ຽວກັບການປະຕິບັດມາດຕະການທາງບໍລິຫານ ທີ່ບໍ່ຖືກຕ້ອງຕາມກົດໝາຍ ເປັນຕົ້ນ ການປັບໃໝ;
2. ການບໍ່ປະຕິບັດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
3. ການອອກ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດລົງທຶນ ແລະ ໃບອະນຸຍາດອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ການປະຕິເສດ ການອອກໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດລົງທຶນ ແລະ ໃບອະນຸຍາດອື່ນ;
5. ການກຳນົດອາກອນ, ຄ່າຊັກ, ຄ່າທຳນຽມ ແລະ ຄ່າບໍລິການ; ການເກັບຄ່າອາກອນ, ຄ່າຊັກ, ຄ່າທຳນຽມ ແລະ ຄ່າບໍລິການ; ການເກັບອາກອນທີ່ດິນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
6. ການລະເມີດລະບອບພາສີ;
7. ການໃຫ້ເຊົ່າ, ການໃຫ້ສຳປະທານ, ການມອບສິດນຳໃຊ້ທີ່ດິນ ແລະ ອື່ນໆ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
8. ການຕົກລົງແກ້ໄຂຄຳຮ້ອງທຸກ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
9. ການລົງວິໄນໄລ່ອອກການ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຕໍ່ພະນັກງານ-ລັດຖະກອນ ຂັ້ນຫົວໜ້າກົມລົງໄປ.

**ມາດຕາ 9 ການປະຕິເສດການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ**

ລັດ ປະຕິເສດການຊົດເຊີຍຄ່າເສຍຫາຍ ຈາກການຄຸ້ມຄອງບໍລິຫານລັດ ໃນກໍລະນີ ດັ່ງນີ້:

1. ຄ່າເສຍຫາຍທີ່ເກີດຂຶ້ນ ຍ້ອນຄວາມຜິດຂອງຜູ້ຖືກເສຍຫາຍເອງ;
2. ຄ່າເສຍຫາຍທີ່ເກີດຂຶ້ນ ຍ້ອນເຫດສຸດວິໄສ ເຖິງວ່າ ຜູ້ປະຕິບັດໜ້າທີ່ ໄດ້ນຳໃຊ້ທຸກມາດຕະການທີ່ຈຳເປັນ ແລະ ຢູ່ໃນຄວາມຮັບຜິດຊອບແລ້ວ;
3. ຄ່າເສຍຫາຍທີ່ເກີດ ຍ້ອນການປະຕິບັດໜ້າທີ່ ເພື່ອຫຼີກເວັ້ນໄພຂົ່ມຂູ່ໂດຍກົງ ຫຼື ການປະຕິບັດໜ້າທີ່ ເພື່ອເຮັດໃຫ້ເກີດການສູນເສຍໜ້ອຍລົງ;

4. ຄ່າເສຍຫາຍທີ່ເກີດຂຶ້ນ ຍ້ອນຜູ້ຖືກເສຍຫາຍ ໃຫ້ການເທັດ, ແຈ້ງຂໍ້ມູນທີ່ເປັນເທັດ, ຫຼັກຖານເທັດ;

5. ຄ່າເສຍຫາຍທີ່ເກີດຂຶ້ນ ຍ້ອນຜູ້ຖືກເສຍຫາຍ ໄດ້ມີການຖອນຄຳຮ້ອງຟ້ອງແລ້ວ;

6. ຄ່າເສຍຫາຍທີ່ເກີດຂຶ້ນ ຍ້ອນຜູ້ປະຕິບັດໜ້າທີ່ ໄດ້ນຳໃຊ້ມາດຕະການຮີບດ່ວນ ຕາມຈຸດປະສົງຂອງຜູ້ຮ້ອງຂໍ ຊຶ່ງສ້າງຄວາມເສຍຫາຍໃຫ້ຜູ້ຖືກນຳໃຊ້ມາດຕະການ ຫຼື ບຸກຄົນທີສາມ.

## ໝວດທີ 2
## ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ
## ແລະ ອົງການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ

### ມາດຕາ 10 ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ

ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ ແມ່ນ ບຸກຄົນ, ນິຕິບຸຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບຄວາມເສຍຫາຍທາງດ້ານວັດຖຸ ແລະ ຈິດໃຈ ທີ່ເກີດຈາກການປະຕິບັດໜ້າທີ່ ຂອງຜູ້ປະຕິບັດໜ້າທີ່.

ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ ອາດແມ່ນຜູ້ຖືກເຄາະຮ້າຍ, ຜູ້ຕາງໜ້າຕາມກົດໝາຍ, ຜູ້ຕາງໜ້າທີ່ຖືກ ມອບສິດຢ່າງຖືກຕ້ອງຈາກຜູ້ຖືກເຄາະຮ້າຍ, ຜູ້ສືບທອດຂອງຜູ້ຖືກເຄາະຮ້າຍໃນກໍລະນີຜູ້ຖືກເຄາະຮ້າຍເສຍຊີວິດ ຫຼື ການຈັດຕັ້ງທີ່ໄດ້ຮັບສິດ ແລະ ພັນທະ ຂອງການຈັດຕັ້ງທີ່ຖືກເສຍຫາຍ ໄດ້ສິ້ນສຸດ.

### ມາດຕາ 11 ສິດ ແລະ ພັນຂອງຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ

ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ ມີ ສິດ ແລະ ພັນທະ ດັ່ງນີ້:

1. ຍື່ນຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ດ້ວຍຕົນເອງ ຫຼື ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ ຫຼື ຖອນຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ໃນທຸກຂັ້ນຕອນຂອງການພິຈາລະນາແກ້ໄຂ;

2. ໄດ້ຮັບການຊົດເຊີຍຄ່າເສຍຫາຍ ແລະ ຟື້ນຟູຄືນ ກຽດສັກສີ ແລະ ຜົນປະໂຫຍດອື່ນ ທີ່ຖືກລະເມີດ;

3. ໄດ້ຮັບການແນະນຳ ແລະ ຮັບຊາບຜົນການແກ້ໄຂການຊົດເຊີຍຄ່າເສຍຫາຍຢ່າງເປັນລາຍລັກອັກສອນຈາກອົງການທີ່ກ່ຽວຂ້ອງ;

4. ສະເໜີຊີ້ແຈງ, ອະທິບາຍ ກ່ຽວກັບຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ພ້ອມທັງສະໜອງຂໍ້ມູນຫຼັກຖານທີ່ຖືກຕ້ອງ ແລະ ຄົບຖ້ວນ ຕໍ່ອົງການຊົດເຊີຍຄ່າເສຍຫາຍ;

5. ຮັບຜິດຊອບຕໍ່ເນື້ອໃນຄຳຮ້ອງ, ຂໍ້ມູນຫຼັກຖານ ທີ່ຕົນສະເໜີຕໍ່ອົງການຊົດເຊີຍຄ່າເສຍຫາຍ;

6. ຮັບຜິດຊອບຄ່າເສຍຫາຍຕໍ່ການຮ້ອງທຸກທີ່ບໍ່ມີມູນຄວາມຈິງ;

7. ປະຕິບັດຕາມການເຊີນ ຫຼື ໝາຍຮຽກຂອງອົງການທີ່ກ່ຽວຂ້ອງ ຕາມກຳນົດເວລາ ແລະ ສະຖານທີ່, ຖ້າບໍ່ປະຕິບັດຕາມການເຊີນ ຫຼື ໝາຍຮຽກ ທີ່ໄດ້ຮັບເຖິງສາມຄັ້ງຕິດຕໍ່ກັນ ໂດຍບໍ່ມີເຫດຜົນຖືວ່າໝົດສິດ;

8. ວາງຕົວໃຫ້ເໝາະສົມ ແລະ ເຄົາລົບກົດລະບຽບຂອງອົງການທີ່ ເຊີນ ຫຼື ຮຽກ;

9. ປະຕິບັດຕາມການຕົກລົງ ກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ທີ່ມີຜົນສັກສິດທາງດ້ານກົດ ໝາຍ;

10. ມີສິດ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 12 ອົງການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ**

ອົງການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ ປະກອບດ້ວຍ:

1. ອົງການຊົດເຊີຍຄ່າເສຍຫາຍ ຂັ້ນສູນກາງ ຊຶ່ງແມ່ນ ບັນດາກະຊວງ, ອົງການ ເປັນຕົວແທນຊົດເຊີຍຄ່າເສຍຫາຍ ໃນກໍລະນີຜູ້ປະຕິບັດໜ້າທີ່ ທີ່ສ້າງຄວາມເສຍຫາຍ ຫາກຂຶ້ນກັບສິດອຳນາດໃນການຄຸ້ມຄອງໂດຍກົງ ຂອງຕົນ;

2. ອົງການຊົດເຊີຍຄ່າເສຍຫາຍ ຂັ້ນແຂວງ ຊຶ່ງແມ່ນ ອົງການປົກຄອງຂັ້ນແຂວງ ຫຼື ພະແນກ, ອົງການທຽບເທົ່າພະແນກຂັ້ນແຂວງ ເປັນຕົວແທນຊົດເຊີຍຄ່າເສຍຫາຍ ໃນກໍລະນີຜູ້ປະຕິບັດໜ້າທີ່ ຫາກຂຶ້ນກັບສິດອຳນາດໃນການຄຸ້ມຄອງໂດຍກົງ ຂອງຕົນ;

3. ອົງການຊົດເຊີຍຄ່າເສຍຫາຍ ຂັ້ນເມືອງ ຊຶ່ງແມ່ນ ອົງການປົກຄອງຂັ້ນເມືອງ ຫຼື ຫ້ອງການ, ອົງການທຽບເທົ່າຫ້ອງການຂັ້ນເມືອງ ເປັນຕົວແທນຊົດເຊີຍຄ່າເສຍຫາຍ ໃນກໍລະນີຜູ້ປະຕິບັດໜ້າ ຫາກຂຶ້ນກັບສິດອຳນາດໃນການຄຸ້ມຄອງໂດຍກົງ ຂອງຕົນ.

**ມາດຕາ 13 ຄວາມຮັບຜິດຊອບຂອງອົງການຊົດເຊີຍຄ່າເສຍຫາຍ**

ອົງການຊົດເຊີຍຄ່າເສຍຫາຍ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຊົດເຊີຍ, ຟື້ນຟູຄ່າເສຍຫາຍໃຫ້ຜູ້ຖືກເສຍຫາຍ;
2. ອະທິບາຍໃຫ້ຜູ້ຮ້ອງຂໍການຊົດເຊີຍ ຫຼື ຜູ້ຖືກເສຍຫາຍ ກ່ຽວກັບສິດ ແລະ ພັນທະຂອງເຂົາເຈົ້າ;
3. ກວດກາຢັ້ງຢືນຄວາມເສຍຫາຍ, ດຳເນີນການເຈລະຈາ ແລະ ປຶກສາຫາລືໃນການແກ້ໄຂການຊົດເຊີຍຄ່າເສຍ;
4. ຮັບຜິດຊອບຕໍ່ຄວາມຄົບຖ້ວນ, ສົມບູນ ແລະ ຄວາມເປັນໄປໄດ້ຂອງຄຳຮ້ອງຂໍການຊົດເຊີຍ ແລະ ເອກະສານອື່ນທີ່ກ່ຽວຂ້ອງ;
5. ຕົກລົງ ກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ;
6. ສົ່ງຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ໃຫ້ການຈັດຕັ້ງອື່ນທີ່ມີສິດອຳນາດກ່ຽວຂ້ອງ ເພື່ອແກ້ໄຂ;
7. ຟື້ນຟູ ຫຼື ສະເໜີໃຫ້ການຈັດຕັ້ງທີ່ມີສິດອຳນາດກ່ຽວຂ້ອງ ຟື້ນຟູ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຖືກເຄາະຮ້າຍ;
8. ແນະນຳໃຫ້ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ໃຫ້ດຳເນີນຕາມຂັ້ນຕອນຂອງການຮ້ອງຂໍ;
9. ແກ້ໄຂຄຳຮ້ອງທຸກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ;
10. ເຂົ້າຮ່ວມໃນການດຳເນີນຄະດີຢູ່ສານ ໃນກໍລະນີທີ່ຜູ້ຮ້ອງຂໍການຊົດເຊີຍ ຮ້ອງຟ້ອງຕໍ່ສານ;
11. ລາຍງານກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ, ຄວາມຮັບຜິດຊອບໃນການຊຳລະເງິນຄືນ ແລະ ການລົງວິໄນຕໍ່ຜູ້ປະຕິບັດໜ້າທີ່ ທີ່ກໍ່ຄວາມເສຍຫາຍ;
12. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ຂັ້ນຕອນການແກ້ໄຂການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ

**ມາດຕາ 14 ການຮ້ອງຂໍການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກເຫັນວ່າຕົນ ໄດ້ຮັບຄວາມເສຍຫາຍ ເນື່ອງມາຈາກການກະທຳຂອງຜູ້ປະຕິບັດໜ້າທີ່ ມີສິດຍື່ນຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ຕໍ່ອົງການຊົດເຊີຍຄ່າເສຍຫາຍ ບ່ອນຜູ້ປະຕິບັດໜ້າທີ່ຂຶ້ນກັບ ພາຍໃນກຳນົດເວລາ ສາມປີ ນັບແຕ່ວັນຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ໄດ້ຮັບເອກະສານທີ່ເປັນບ່ອນອີງໃນການຮ້ອງຂໍການຊົດເຊີຍຄ່າເສຍຫາຍ ເປັນຕົ້ນໄປ.

ໃນລະນີ ບໍ່ພໍໃຈຕໍ່ການແກ້ໄຂການຊົດເຊີຍຄ່າເສຍຫາຍຂອງອົງການຊົດເຊີຍຄ່າເສຍຫາຍ ກໍມີສິດຮ້ອງຟ້ອງ ຫຼື ຮ້ອງຂໍຕໍ່ສານປະຊາຊົນ ພິຈາລະນາແກ້ໄຂ ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນໄດ້ຮັບຄຳຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຈາກອົງການຊົດເຊີຍເສຍຫາຍ ເປັນຕົ້ນໄປ.

**ມາດຕາ 15 ເອກະສານປະກອບຮ້ອງຂໍການຊົດເຊີຍ**

ເອກະສານປະກອບຮ້ອງຂໍການຊົດເຊີຍ ໃນກໍລະນີຜູ້ຖືກເສຍຫາຍ ຮ້ອງຂໍການຊົດເຊີຍດ້ວຍຕົນເອງ ມີດັ່ງນີ້:

1. ຄຳຮ້ອງ;
2. ເອກະສານທີ່ເປັນພື້ນຖານສຳລັບການຮ້ອງຂໍ (ຖ້າມີ);
3. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວຂອງຜູ້ຖືກເສຍຫາຍ;
4. ຫຼັກຖານ ຫຼື ເອກະສານ ທີ່ກ່ຽວຂ້ອງກັບການຮ້ອງຂໍ (ຖ້າມີ).

ໃນກໍລະນີຜູ້ຮ້ອງຂໍການຊົດເຊີຍ ເປັນຜູ້ສືບທອດ ຫຼື ເປັນຜູ້ຕາງໜ້າຂອງຜູ້ຖືກເສຍຫາຍ ນອກຈາກເອກະສານ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ແລ້ວ ຍັງຕ້ອງມີເອກະສານ ດັ່ງນີ້:

1. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວຂອງຜູ້ສືບທອດ ຫຼື ຜູ້ຕາງໜ້າ;
2. ໃບມອບສິດຂອງຜູ້ຖືກເສຍຫາຍ;
3. ໃບຢັ້ງຢືນການສືບທອດ ໃນກໍລະນີຜູ້ຖືກເສຍຫາຍ ຫາກເສຍຊີວິດ.

ຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ, ເລກໂທລະສັບ ແລະ ທີ່ຢູ່ທາງເອເລັກໂຕຣນິກຂອງຜູ້ຮ້ອງຂໍການຊົດເຊີຍ;
2. ວັນທີ, ເດືອນ ແລະ ປີ ການຮ້ອງຂໍ;
3. ການກະທຳຂອງຜູ້ປະຕິບັດໜ້າທີ່ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ;
4. ສາຍພົວພັນ ລະຫວ່າງ ການກະທຳທີ່ກໍ່ໃຫ້ເກີດຄວາມເສຍຫາຍ ແລະ ຄວາມເສຍຫາຍ;
5. ຂອບເຂດຄວາມເສຍຫາຍ ແລະ ມູນຄ່າການຊົດເຊີຍຄ່າເສຍຫາຍທີ່ຮ້ອງຂໍ;
6. ລະດັບຄວາມເສຍຫາຍ, ການຄິດໄລ່ ແລະ ການຮ້ອງຂໍ;
7. ຄ່າຊົດເຊີຍລ່ວງໜ້າ(ຖ້າມີ);

8. ຄຳສະເໜີໃຫ້ອົງການຊົດເຊີຍຄ່າເສຍຫາຍ ເພື່ອເກັບເອກະສານ ທີ່ເປັນພື້ນຖານໃຫ້ແກ່ການຊົດເຊີຍຄ່າເສຍຫາຍ ແຕ່ຕ້ອງກຳນົດແຈ້ງ ກ່ຽວກັບເອກະສານ ແລະ ສະຖານທີ່ເກັບເອກະສານດັ່ງກ່າວ ໃນກໍລະນີທີ່ຜູ້ຮ້ອງຂໍບໍ່ສາມາດເກັບເອກະສານດ້ວຍຕົນເອງໄດ້;

9. ການຮ້ອງຂໍໃຫ້ມີການຟື້ນຟູກຽດສັກສີ, ສິດ ແລະ ຜົນປະໂຫຍດອັນຊອບທຳ (ຖ້າມີ).

ໃນກໍລະນີຜູ້ຖືກເສຍຫາຍ ຮ້ອງຂໍໃຫ້ມີການຟື້ນຟູກຽດສັກສີ, ສິດ ແລະ ຜົນປະໂຫຍດອັນຊອບທຳ ເນື້ອໃນຄຳຮ້ອງ ຕ້ອງມີເນື້ອໃນຕາມທີ່ໄດ້ກຳນົດໃນ ວັກທີໜຶ່ງ ຂອງມາດຕານີ້. ໃນກໍລະນີຜູ້ຮ້ອງຂໍການຊົດເຊີຍ ເປັນຜູ້ສືບທອດ ຫຼື ເປັນຜູ້ຕາງໜ້າຂອງຜູ້ຖືກເສຍຫາຍ ນອກຈາກເອກະສານຕາມທີ່ໄດ້ກຳນົດໄວ້ໃນ ວັກທີໜຶ່ງ ຂອງມາດຕານີ້ແລ້ວ ຍັງຕ້ອງມີເອກະສານ ເພີ່ມເຕີມ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີສອງ, ຂໍ້ທີ 1 ຫາ 4 ຂອງມາດຕານີ້.

ຄຳຮ້ອງຂໍການຊົດເຊີຍ ຕ້ອງເຮັດເປັນພາສາລາວ ທີ່ສາມາດອ່ານ ແລະ ເຂົ້າໃຈເນື້ອໃນໄດ້ງ່າຍ, ໃນກໍລະນີຄຳຮ້ອງຂໍ ເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຈາກອົງການທະບຽນສານ.

### ມາດຕາ 16 ການພິຈາລະນາການຮ້ອງຂໍການຊົດເຊີຍ

ພາຍຫຼັງໄດ້ຮັບຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ອົງການຊົດເຊີຍຄ່າເສຍຫາຍ ຕ້ອງກວດກາຄວາມຖືກຕ້ອງຂອງຄຳຮ້ອງ ແລະ ເອກະສານປະກອບ, ຖ້າຫາກເຫັນວ່າ ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ກໍມີສິດແນະນຳໃຫ້ຜູ້ຖືກເສຍຫາຍ ປັບປຸງ ຫຼື ເພີ່ມເຕີມຂໍ້ມູນ.

ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຖືກຕ້ອງ ແລະ ຄົບຖ້ວນແລ້ວ ແລະ ເຫັນວ່າ ຄຳຮ້ອງຂໍດັ່ງກ່າວ ຢູ່ໃນຄວາມຮັບຜິດຊອບໃນການຊົດເຊີຍຄ່າເສຍຫາຍຂອງຕົນ ອົງການດັ່ງກ່າວ ຈະຮັບຄຳຮ້ອງຂໍການຊົດເຊີຍ ມາແກ້ໄຂ ພ້ອມທັງແຈ້ງໃຫ້ຜູ້ຖືກເສຍຫາຍຢ່າງເປັນລາຍລັກອັກສອນ. ຖ້າຫາກຄຳຮ້ອງຂໍນັ້ນ ຫາກບໍ່ຢູ່ໃນຄວາມຮັບຜິດຊອບໃນການຊົດເຊີຍຄ່າເສຍຫາຍຂອງຕົນ ອົງການທີ່ຮັບຄຳຮ້ອງ ຈະສົ່ງຄຳຮ້ອງນັ້ນ ຄືນໃຫ້ຜູ້ຖືກເສຍຫາຍ ພ້ອມທັງແນະນຳໃຫ້ຜູ້ກ່ຽວ ຍື່ນຄຳຮ້ອງຂອງຕົນ ຕໍ່ອົງການທີ່ມີສິດອຳນາດ ເພື່ອພິຈາລະນາແກ້ໄຂ.

### ມາດຕາ 17 ການກວດກາຢັ້ງຢືນຄວາມເສຍຫາຍ

ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍການຊົດເຊີຍ ອົງການຊົດເຊີຍຄ່າເສຍຫາຍ ຈະກວດກາຢັ້ງຢືນຄວາມເສຍຫາຍຢ່າງລະອຽດ ເພື່ອນຳໃຊ້ເປັນພື້ນຖານໃນການກຳນົດມູນຄ່າການຊົດເຊີຍຄ່າເສຍຫາຍ. ໃນກໍລະນີ ມີຄວາມສັບສົນ ຫຼື ຕ້ອງກວດກາຢູ່ຫຼາຍສະຖານທີ່ ກຳນົດເວລາໃນການກວດກາ ອາດແກ່ຍາວແຕ່ບໍ່ໃຫ້ກາຍ ສີ່ສິບວັນ.

ອີງໃສ່ສະພາບ ແລະ ເນື້ອໃນຂອງບັນຫາ ອົງການຊົດເຊີຍຄ່າເສຍຫາຍ ອາດມີການຈັດຕັ້ງໃຫ້ຕີລາຄາຊັບສິນ, ພິຈາລະນາຄວາມເສຍຫາຍທາງດ້ານຊັບສິນ, ຄວາມເສຍຫາຍທາງດ້ານສຸຂະພາບ ຫຼື ຮັບເອົາຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງ ໃນການແກ້ໄຂການຊົດເຊີຍ.

ຄ່າໃຊ້ຈ່າຍໃນການຕີລາຄາ ຫຼື ພິຈາລະນາດັ່ງກ່າວ ແມ່ນນຳໃຊ້ງົບປະມານຂອງລັດ. ໃນກໍລະນີ ຜູ້ຖືກເສຍຫາຍ ຫາກບໍ່ພໍໃຈຜົນການຕີລາຄາ ແລະ ມີການຮ້ອງຂໍໃຫ້ຕີລາຄາ ຫຼື ພິຈາລະນາຄືນໃໝ່ ໂດຍການເຫັນດີເປັນເອກະພາບຂອງອົງການຊົດເຊີຍຄ່າເສຍຫາຍ ຄ່າໃຊ້ຈ່າຍໃນການຕີລາຄາ ຫຼື ພິຈາລະນາຄືນໃໝ່ ແມ່ນຄວາມຮັບຜິດຊອບຂອງຜູ້ຖືກເສຍຫາຍ ຍົກເວັ້ນ ຫາກໄດ້ພິສູດໃຫ້ເຫັນວ່າ ການຮ້ອງຂໍໃຫ້ຕີລາຄາ ຫຼື ພິຈາລະນາຄືນໃໝ່ນັ້ນມີເຫດຜົນ.

**ມາດຕາ 18 ການເຈລະຈາການຊົດເຊີຍຄ່າເສຍຫາຍ**

ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດການກວດກາຢັ້ງຢືນຄວາມເສຍຫາຍ ອົງການຊົດເຊີຍຄ່າເສຍຫາຍ ຈະເຈລະຈາກັບຜູ້ຖືກເສຍຫາຍ ກ່ຽວກັບການແກ້ໄຂການຊົດເຊີຍ. ໃນກໍລະນີມີຄວາມຫຍຸ້ງຍາກສັບສົນ ກຳນົດເວລາໃນການເຈລະຈາ ອາດແກ່ຍາວອອກໄປ ແຕ່ສູງສຸດ ບໍ່ໃຫ້ເກີນ ສີ່ສິບຫ້າວັນ.

ຜູ້ເຂົ້າຮ່ວມໃນການເຈລະຈາ ປະກອບມີ ຜູ້ຕາງໜ້າອົງການຊົດເຊີຍຄ່າເສຍຫາຍ ແລະ ຜູ້ຖືກເສຍຫາຍ, ຜູ້ສືບທອດ ຫຼື ຜູ້ຕາງໜ້າ ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ຖືກເສຍຫາຍ. ໃນກໍລະນີຈຳເປັນ ຜູ້ປະຕິບັດໜ້າທີ່ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ອາດຖືກເຊີນໃຫ້ເຂົ້າຮ່ວມການເຈລະຈາ. ຜູ້ຕາງໜ້າອົງການຊົດເຊີຍຄ່າເສຍຫາຍ ຕ້ອງເປັນບຸກຄົນທີ່ມີຄວາມສາມາດ ໃນການເຈລະຈາ ເພື່ອບັນລຸການຕົກລົງກ່ຽວກັບການຊົດເຊີຍກັບຜູ້ຖືກເສຍຫາຍ ແລະ ມີຄວາມຮັບຜິດຊອບຕໍ່ອົງການຕົນ.

ສະຖານທີ່ເຈລະຈາ ອາດແມ່ນຫ້ອງການຂອງອົງການຊົດເຊີຍຄ່າເສຍຫາຍ ຫຼື ຫ້ອງການບ້ານ ບ່ອນຜູ້ຖືກເສຍຫາຍອາໄສຢູ່ ເວັ້ນເສຍແຕ່ໄດ້ຕົກລົງກັນເປັນຢ່າງອື່ນ.

ການເຈລະຈາ ຕ້ອງມີບົດບັນທຶກເປັນລາຍລັກອັກສອນ. ບົດບັນທຶກການເຈລະຈາ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ວັນ, ເດືອນ, ປີ ການເຈລະຈາ;
2. ສະຖານທີ່ ແລະ ຜູ້ເຂົ້າຮ່ວມໃນການເຈລະຈາ;
3. ຄຳເຫັນຂອງຜູ້ເຂົ້າຮ່ວມໃນການເຈລະຈາ;
4. ເນື້ອໃນເຈລະຈາ ທີ່ຕົກລົງກັນໄດ້ ຫຼື ບໍ່ສາມາດຕົກລົງກັນໄດ້.

ບົດບັນທຶກການເຈລະຈາ ຕ້ອງມີລາຍເຊັນຂອງຜູ້ເຂົ້າຮ່ວມການເຈລະຈາ ແລະ ສົ່ງໃຫ້ຜູ້ຖືກເສຍຫາຍທັນທີ ພາຍຫຼັງສິ້ນສຸດການເຈລະຈາ.

ຜົນຂອງການເຈລະຈາ ຈະນຳໃຊ້ເປັນພື້ນຖານ ໃນການຕົກລົງກ່ຽວກັບການຊົດເຊີຍຄ່າເສຍຫາຍ.

**ມາດຕາ 19 ການຕົກລົງແກ້ໄຂການຊົດເຊີຍຄ່າເສຍຫາຍ**

ພາຍໃນກຳນົດເວລາ ສິບວັນລັດຖະການ ນັບແຕ່ວັນສິ້ນສຸດການເຈລະຈາ ອົງການຊົດເຊີຍຄ່າເສຍຫາຍ ຈະອອກຂໍ້ຕົກລົງ ກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍ.

ຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່, ນາມສະກຸນ ແລະ ທີ່ຢູ່ ຂອງຜູ້ຮ້ອງຂໍການຊົດເຊີຍ;
2. ເຫດຜົນໂດຍຫຍໍ້ ກ່ຽວກັບການຮ້ອງຂໍການຊົດເຊີຍ;
3. ພື້ນຖານການກຳນົດຄວາມຮັບຜິດຊອບການຊົດເຊີຍ;
4. ມູນຄ່າການຊົດເຊີຍ;
5. ສິດໃນການຮ້ອງຟ້ອງ ຫຼື ຮ້ອງຂໍຕໍ່ສານປະຊາຊົນ ໃນກໍລະນີບໍ່ພໍໃຈຕໍ່ຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍ;
6. ຜົນສັກສິດຂອງຂໍ້ຕົກລົງການແກ້ໄຂການຊົດເຊີຍ.

**ມາດຕາ 20 ການລຶບລ້າງ, ການປ່ຽນແປງ ແລະ ເພີ່ມເຕີມ ຂໍ້ຕົກລົງແກ້ໄຂການຊົດເຊີຍຄ່າເສຍຫາຍ**

ຫົວໜ້າອົງການຊົດເຊີຍຄ່າເສຍຫາຍ ອອກຂໍ້ຕົກລົງລຶບລ້າງຂໍ້ຕົກລົງກ່ຽວກັບແກ້ໄຂການຊົດເຊີຍຄ່າເສຍຫາຍ ແລະ ໂຈະການແກ້ໄຂການຮ້ອງຂໍການຊົດເຊີຍຄ່າເສຍຫາຍ ພາຍໃນເວລາກໍານົດເວລາ ສອງວັນລັດຖະການ ນັບແຕ່ວັນໄດ້ມີຂໍ້ມູນອ້າງອີງ ດັ່ງນີ້:

1. ບໍ່ມີຂໍ້ມູນຫຼັກຖານ ຫຼື ເອກະສານ ທີ່ເປັນບ່ອນອີງວ່າ ຄວາມເສຍຫາຍດັ່ງກ່າວ ຢູ່ໃນຄວາມຮັບຜິດຊອບການຊົດເຊີຍຄ່າເສຍຫາຍຂອງຕົນ;
2. ມີການປອມແປງເອກະສານ ເພື່ອຢັ້ງຢືນການຮ້ອງຂໍການຊົດເຊີຍ.

ຜົນສະທ້ອນຂອງການລຶບລ້າງ ຂໍ້ຕົກລົງກ່ຽວກັບແກ້ໄຂການຊົດເຊີຍຄ່າເສຍຫາຍ ຕາມທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ຈະຖືກແກ້ໄຂ ດັ່ງນີ້:

1. ກໍລະນີບໍ່ໄດ້ຈ່າຍຄ່າຊົດເຊີຍໃຫ້ຜູ້ຖືກເຄາະຮ້າຍ ອົງການຊົດເຊີຍຄ່າເສຍຫາຍ ຈະອອກຂໍ້ຕົງລົງຍົກເລີກ ແລະ ຖອນເງິນທີ່ມີການຮ້ອງຂໍໃຫ້ຊົດເຊີຍລ່ວງໜ້າ (ຖ້າມີ);
2. ກໍລະນີໄດ້ຈ່າຍຄ່າຊົດເຊີຍໃຫ້ຜູ້ຖືກເຄາະຮ້າຍ ອົງການຊົດເຊີຍຄ່າເສຍຫາຍ ມີໜ້າທີ່ຕິດຕາມນໍາເອົາເງິນ ທີ່ໄດ້ຈ່າຍໄປແລ້ວນັ້ນ ຄືນ;
3. ກໍລະນີຜູ້ປະຕິບັດໜ້າທີ່ ໄດ້ຈ່າຍເງິນຊົດເຊີຍ ອົງການຊົດເຊີຍຄ່າເສຍຫາຍ ມີໜ້າທີ່ ຕິດຕາມນໍາເອົາເງິນທີ່ໄດ້ຈ່າຍໄປແລ້ວນັ້ນ ຄືນ;
4. ແກ້ໄຂຜົນສະທ້ອນອື່ນ (ຖ້າມີ) ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ຫົວໜ້າອົງການຊົດເຊີຍຄ່າເສຍຫາຍ ອອກຂໍ້ຕົກລົງລຶບລ້າງຂໍ້ຕົກລົງກ່ຽວກັບແກ້ໄຂການຊົດເຊີຍຄ່າເສຍຫາຍ ເພື່ອແກ້ໄຂຄືນ ພາຍໃນກໍານົດເວລາ ສອງວັນລັດຖະການ ນັບແຕ່ວັນໄດ້ມີຂໍ້ມູນອ້າງອີງ ດັ່ງນີ້:

1. ມີການສົມຮູ້ຮ່ວມຄິດ ລະຫວ່າງ ຜູ້ຮ້ອງຂໍການຊົດເຊີຍ ກັບ ຜູ້ມີສິດແກ້ໄຂການຊົດເຊີຍ ຫຼື ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກການຮ້ອງຂໍການຊົດເຊີຍ;
2. ຜູ້ມີສິດແກ້ໄຂການຊົດເຊີຍ ບໍ່ປະຕິບັດຕາມເນື້ອໃນ ຫຼື ຂັ້ນຕອນການແກ້ໄຂການຊົດເຊີຍ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

ຫົວໜ້າອົງການຊົດເຊີຍຄ່າເສຍຫາຍ ອອກຂໍ້ຕົກລົງປ່ຽນແປງ, ເພີ່ມເຕີມ ຂໍ້ຕົກລົງກ່ຽວກັບແກ້ໄຂການຊົດເຊີຍຄ່າເສຍຫາຍ ພາຍໃນກໍານົດເວລາ ສອງວັນລັດຖະການ ນັບແຕ່ວັນໄດ້ພິສູດໃຫ້ເຫັນວ່າ ຂໍ້ຕົກລົງກ່ຽກັບ ແກ້ໄຂການຊົດເຊີຍຄ່າເສຍຫາຍ ມີຄວາມຜິດພາດ.

ຂໍ້ຕົກລົງລຶບລ້າງ, ປ່ຽນແປງ ຫຼື ເພີ່ມເຕີມ ຂໍ້ຕົກລົງແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍການຊົດເຊີຍ ແລະ ອົງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 21 ການເລື່ອນການແກ້ໄຂການຊົດເຊີຍ**

ຫົວໜ້າອົງການຊົດເຊີຍຄ່າເສຍຫາຍ ຕົກລົງເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ ພາຍໃນກໍານົດເວລາ ສອງວັນລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍເລື່ອນການແກ້ໄຂການຊົດເຊີຍ ຍ້ອນຜູ້ຮ້ອງຂໍ ເຈັບປ່ວຍໜັກ ໂດຍມີການຢັ້ງຢືນຈາກແພດ ຫຼື ມີເຫດຜົນອື່ນ ທີ່ຢັ້ງຢືນວ່າ ບໍ່ສາມາດເຂົ້າຮ່ວມໃນຂະບວນການແກ້ໄຂການຊົດເຊີຍຄ່າເສຍຫາຍໄດ້.

ກຳນົດເວລາໃນການເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງກຳນົດໄວ້ໃນຄຳຮ້ອງຂໍເລື່ອນການຊົດເຊີຍ ແຕ່ສູງສຸດ ບໍ່ໃຫ້ເກີນ ສາມສິບວັນ ເວັ້ນເສຍແຕ່ຜູ້ຮ້ອງຂໍ ເຈັບປ່ວຍຢ່າງໜັກ ແລະ ບໍ່ສາມາດເຂົ້າຮ່ວມໃນຂະບວນການແກ້ໄຂການຊົດເຊີຍຄ່າເສຍຫາຍໄດ້.

ຂໍ້ຕົກລົງເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງກຳນົດແຈ້ງ ເຫດຜົນ, ກຳນົດເວລາເລື່ອນ ແລະ ສົ່ງໃຫ້ຜູ້ຮ້ອງຂໍ ແລະ ອົງການອື່ນທີ່ກ່ຽວຂ້ອງ. ພາຍຫຼັງໝົດກຳນົດເວລາການເລື່ອນການແກ້ໄຂການຊົດເຊີຍຄ່າເສຍຫາຍ ຫົວໜ້າອົງການຊົດເຊີຍຄ່າເສຍຫາຍ ຕ້ອງອອກຂໍ້ຕົກລົງສືບຕໍ່ການແກ້ໄຂການຊົດເຊີຍ.

**ມາດຕາ 22 ການໂຈະການແກ້ໄຂການຊົດເຊີຍຄ່າເສຍຫາຍ**

ຫົວໜ້າອົງການຊົດເຊີຍຄ່າເສຍຫາຍ ຕົກລົງ ໂຈະການແກ້ໄຂການຊົດເຊີຍຄ່າເສຍຫາຍ ພາຍໃນກຳນົດເວລາ ໜຶ່ງວັນລັດຖະການ ນັບແຕ່ວັນໄດ້ມີຂໍ້ມູນອ້າງອີງໃດໜຶ່ງ ດັ່ງນີ້:

1. ຜູ້ຮ້ອງຂໍ ປະຕິເສດວ່າ ບໍ່ໄດ້ຮັບໝາຍເຊີນໃຫ້ເຂົ້າຮ່ວມການເຈລະຈາ ການແກ້ໄຂການຊົດເຊີຍຄ່າເສຍຫາຍ ສອງຄັ້ງ;
2. ຜູ້ຮ້ອງຂໍ ບໍ່ເຂົ້າຮ່ວມການເຈລະຈາ ການແກ້ໄຂການຊົດເຊີຍຄ່າເສຍຫາຍ ທັງສອງຄັ້ງ ພາຍຫຼັງໄດ້ຮັບ ໝາຍເຊີນ ໂດຍບໍ່ມີເຫດຜົນພຽງພໍ;
3. ຜູ້ຮ້ອງຂໍ ບໍ່ໄດ້ເຊັນປິດບັນທຶກການເຈລະຈາການແກ້ໄຂການຊົດເຊີຍ;
4. ອົງການ, ຜູ້ທີ່ມີສິດອຳນາດ ໄດ້ມີການພິຈາລະນາຄືນ ເອກະສານທີ່ເປັນບ່ອນອີງໃນການແກ້ໄຂການຊົດເຊີຍ.

ການໂຈະການແກ້ໄຂການຊົດເຊີຍຄ່າເສຍຫາຍ ມີກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ອອກຂໍ້ຕົກລົງໂຈະເປັນຕົ້ນໄປ.

ຜູ້ຮ້ອງຂໍການຊົດເຊີຍ ສາມາດຮ້ອງຂໍຕໍ່ກຳນົດເວລາ ໂຈະການແກ້ໄຂການຊົດເຊີຍ ພາຍໃນກຳນົດເວລາ ຫ້າວັນລັດຖະການ ກ່ອນວັນໝົດກຳນົດເວລາການໂຈະການແກ້ໄຂການຊົດເຊີຍ. ຫົວໜ້າອົງການຊົດເຊີຍຄ່າເສຍຫາຍ ຕ້ອງອອກຂໍ້ຕົກລົງສືບຕໍ່ໂຈະການແກ້ໄຂການຊົດເຊີຍ.

ຂໍ້ຕົກລົງການໂຈະການແກ້ໄຂການຊົດເຊີຍ ຕ້ອງກຳນົດແຈ້ງ ເຫດຜົນ, ກຳນົດເວລາ, ສິດ ແລະ ພັນທະຂອງຜູ້ຮ້ອງຂໍການຊົດເຊີຍ ແລະ ຜົນສະທ້ອນທາງດ້ານກົດໝາຍຂອງການໂຈະ. ຂໍ້ຕົກລົງການໂຈະ, ຂໍ້ຕົກລົງການສືບຕໍ່ແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງສົ່ງໃຫ້ຜູ້ຮ້ອງຂໍ ແລະ ອົງການທີ່ກ່ຽວຂ້ອງ.

**ມາດຕາ 23 ການຍົກເລີກການແກ້ໄຂການຊົດເຊີຍຄ່າເສຍຫາຍ**

ຫົວໜ້າອົງການຊົດເຊີຍຄ່າເສຍຫາຍ ຕົກລົງ ຍົກເລີກການແກ້ໄຂການຊົດເຊີຍຄ່າເສຍຫາຍ ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ມີຂໍ້ມູນອ້າງອີງໃດໜຶ່ງ ດັ່ງນີ້:

1. ຜູ້ຮ້ອງຂໍ ໄດ້ຖອນຄຳຮ້ອງຂໍການຊົດເຊີຍ ກ່ອນທີ່ອົງການຊົດເຊີຍຄ່າເສຍຫາຍ ດຳເນີນການກວດກາຢັ້ງຢືນຄວາມເສຍຫາຍ;
2. ຜູ້ຖືກເຄາະຮ້າຍ ເສຍຊີວິດ ໂດຍບໍ່ມີຜູ້ສືບທອດ; ການຈັດຕັ້ງທີ່ຖືກເສຍຫາຍ ໄດ້ສິ້ນສຸດການເຄື່ອນໄຫວ ໂດຍບໍ່ມີການຈັດຕັ້ງສືບຕໍ່ ສິດ ແລະ ພັນທະ;
3. ສິ້ນສຸດກຳນົດເວລາການໂຈະ, ຜູ້ຮ້ອງຂໍ ບໍ່ໄດ້ສະເໜີໃຫ້ສືບຕໍ່ການແກ້ໄຂ ຫຼື ສະເໜີສືບຕໍ່ແກ້ໄຂ ແຕ່ມີການກະທຳໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ມາດຕາ 22 ຂອງກົດໝາຍສະບັບນີ້;

4. ມີຂໍ້ຕົກລົງລົບລ້າງຄຳຕົກລົງການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີໜຶ່ງ ມາດຕາ 20 ຂອງກົດໝາຍສະບັບນີ້;

5. ໝົດກຳນົດເວລາ ສາມສິບວັນ ນັບແຕ່ວັນມີເອກະສານຢັ້ງຢືນ ບໍ່ໄດ້ຮັບຂໍ້ຕົກລົງແກ້ໄຂການຊົດເຊີຍ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີໜຶ່ງ ມາດຕາ 19 ຂອງກົດໝາຍສະບັບນີ້.

ຂໍ້ຕົກລົງຍົກເລີກການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງສົ່ງໃຫ້ຜູ້ຮ້ອງຂໍ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ແລະ ອົງການຊົດເຊີຍຄ່າເສຍຫາຍທີ່ກ່ຽວຂ້ອງ.

ໃນກໍລະນີໄດ້ມີການຈ່າຍຄ່າຊົດເຊີຍລ່ວງໜ້າ ໃຫ້ຜູ້ຮ້ອງຂໍການຊົດເຊີຍ ອົງການຊົດເຊີຍຄ່າເສຍຫາຍ ມີໜ້າທີ່ ຕິດ ຕາມເອົາເງິນທີ່ໄດ້ຈ່າຍໄປແລ້ວນັ້ນຄືນ ໃນກໍລະນີມີຂໍ້ຕົກລົງຍົກເລີກການຊົດເຊີຍ ຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ໃນຂໍ້ 2 ວັກທີໜຶ່ງ ຂອງມາດຕານີ້.

**ມາດຕາ 24 ການຟື້ນຟູ**

ນອກຈາກການຊົດເຊີຍຄ່າເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍສະບັບນີ້ ຜູ້ຖືກເສຍຫາຍ ຈະໄດ້ຮັບການຟື້ນຟູ ດັ່ງນີ້:

1. ຕຳແໜ່ງ (ຖ້າມີ), ໜ້າທີ່ວຽກງານ ແລະ ນະໂຍບາຍອື່ນ ທີ່ຖືກຕ້ອງຕາມກົດໝາຍ;
2. ກຽດສັກສີ, ສິດ ແລະ ຜົນປະໂຫຍດອັນຊອບທຳ;
3. ການຮຽນຮູ້, ວິຊາຊີບ;
4. ການເປັນສະມາຊິກ ໃນກໍລະນີເປັນສະມາຊິກການຈັດຕັ້ງທາງດ້ານການເມືອງ, ອົງການຈັດຕັ້ງສັງຄົມ-ການເມືອງ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງອື່ນ ທີ່ສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍ.

ການຕົກລົງ ແລະ ຂັ້ນຕອນກ່ຽວກັບການຟື້ນຟູສິດ ແລະ ຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍ ຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ ແລະ ເງື່ອນໄຂຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ.

## ໝວດທີ 4
## ການແກ້ໄຂຄຳຮ້ອງກ່ຽວກັບການຊົດເຊີຍຄ່າເສຍຫາຍ ຢູ່ສານປະຊາຊົນ

**ມາດຕາ 25 ການຮ້ອງຂໍໃຫ້ສານປະຊາຊົນແກ້ໄຂການຊົດເຊີຍຄ່າເສຍຫາຍ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກບໍ່ພໍໃຈຕໍ່ການຄົ້ນຄວ້າ ກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຂອງອົງການຊົດເຊີຍຄ່າເສຍຫາຍຈາກການຄຸ້ມຄອງບໍລິຫານລັດ ມີສິດຮ້ອງຂໍຕໍ່ສານປະຊາຊົນ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນຜູ້ຮ້ອງຂໍການຊົດເຊີຍ ໄດ້ຮັບຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ເປັນຕົ້ນໄປ.

**ມາດຕາ 26 ສານປະຊາຊົນທີ່ມີສິດພິຈາລະນາຕັດສິນກ່ຽວກັບການຊົດເຊີຍຄ່າເສຍຫາຍ**

ສານປະຊາຊົນ ທີ່ມີສິດພິຈາລະນາຕັດສິນກ່ຽວກັບການຊົດເຊີຍຄ່າເສຍຫາຍ ມີ ດັ່ງນີ້:

1. ສານປະຊາຊົນຂັ້ນແຂວງ;
2. ສານປະຊາຊົນພາກ;
3. ສານປະຊາຊົນສູງສຸດ.

**ມາດຕາ 27 ຂັ້ນຕອນການແກ້ໄຂການຊົດເຊີຍຄ່າເສຍຫາຍ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍແລ້ວ ສານປະຊາຊົນ ຕ້ອງພິຈາລະນາແກ້ໄຂຄຳຮ້ອງຂໍດັ່ງກ່າວ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍ ເປັນຕົ້ນໄປ.

ປະທານສານ ຈະມອບໃຫ້ຜູ້ພິພາກສາໃດໜຶ່ງ ເປັນຜູ້ຄົ້ນຄວ້າຄວາມຖືກຕ້ອງ ແລະ ຄົບຖ້ວນກ່ຽວກັບຄຳຮ້ອງ ແລະ ເອກະສານປະກອບ, ຖ້າຫາກເຫັນວ່າ ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ກໍມີສິດ ແນະນຳໃຫ້ຜູ້ຖືກເສຍຫາຍ ປັບປຸງ ຫຼື ເພີ່ມເຕີມຂໍ້ມູນ ພາຍໃນກຳນົດເວລາ ສາມວັນ ນັບແຕ່ວັນໄດ້ຮັບການມອບໝາຍເປັນຕົ້ນໄປ, ໃນກໍລະນີ ຄຳຮ້ອງຂໍ ແລະ ເອກະສານປະກອບ ຖືກຕ້ອງ ແລະ ຄົບຖ້ວນແລ້ວ ກໍນຳສະເໜີປະທານສານ ເພື່ອພິຈາລະນາ.

**ມາດຕາ 28 ການພິຈາລະນາແກ້ໄຂການຊົດເຊີຍຄ່າເສຍຫາຍ**

ການພິຈາລະນາແກ້ໄຂການຊົດເຊີຍຄ່າເສຍຫາຍ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ການພິຈາລະນາແກ້ໄຂການຊົດເຊີຍຄ່າເສຍຫາຍ ຕ້ອງມີເນື້ອໃນ ດັ່ງນີ້:

1. ການກະທຳທີ່ກໍ່ໃຫ້ເກີດຄວາມເສຍຫາຍ ທີ່ຢູ່ໃນຄວາມຮັບຜິດຊອບການຊົດເຊີຍຄ່າເສຍຫາຍຂອງລັດ;
2. ຄວາມເສຍຫາຍ, ມູນຄ່າການຊົດເຊີຍ ແລະ ການຟື້ນຟູ(ຖ້າມີ);
3. ອົງການຈ່າຍຄ່າຊົດເຊີຍ, ແລະ ອົງການຟື້ນຟູ(ຖ້າມີ).

ໃນກໍລະນີຜູ້ຮ້ອງຂໍການຊົດເຊີຍ ບໍ່ເຫັນດີກັບເນື້ອໃນຂອງການແກ້ໄຂການຊົດເຊີຍຄ່າເສຍຫາຍ ຕາມຄຳຕັດສິນຂອງສານ ຫຼື ການຕັດສິນຂອງສານ ກ່ຽວກັບການພິຈາລະນາແກ້ໄຂການຊົດເຊີຍຄ່າເສຍຫາຍ ບໍ່ຈະແຈ້ງ ກໍມີສິດສະເໜີຕໍ່ສານຂັ້ນຖັດໄປ ພິຈາລະນາແກ້ໄຂຄືນໃໝ່.

## ພາກທີ III
## ການຊົດເຊີຍຄ່າເສຍຫາຍຈາກການດຳເນີນຄະດີ
### ໝວດທີ 1
### ຂອບເຂດການຊົດເຊີຍຄ່າເສຍຫາຍຈາກການດຳເນີນຄະດີ

**ມາດຕາ 29 ຂອບເຂດການຊົດເຊີຍຄ່າເສຍຫາຍຈາກການດຳເນີນຄະດີ**

ລັດ ຈະຊົດເຊີຍຄ່າເສຍຫາຍທີ່ເກີດຈາກການການດຳເນີນຄະດີ ດັ່ງນີ້:

1. ຄ່າຫາຍທີ່ເກີດຈາກການດຳເນີນຄະດີອາຍາ;
2. ຄ່າເສຍຫາຍທີ່ເກີດຈາກການດຳເນີນຄະດີແພ່ງ;
3. ຄ່າເສຍຫາຍທີ່ເກີດຈາກການຈັດຕັ້ງປະຕິບັດຄຳຕັດສິນຄະດີອາຍາ;
4. ຄ່າເສຍຫາຍທີ່ເກີດຈາກການຈັດຕັ້ງປະຕິບັດຄຳຕັດສິນຄະດີແພ່ງ.

**ມາດຕາ 30 ຄ່າເສຍຫາຍຈາກການດຳເນີນຄະດີອາຍາ**

ລັດ ຈະຊົດເຊີຍຄ່າເສຍຫາຍທີ່ເກີດຈາກການດຳເນີນຄະດີອາຍາ ຂອງອົງການສືບສວນ-ສອບສວນ ໃນກໍລະນີ ດັ່ງນີ້:

1. ກັກຕົວໂດຍບໍ່ມີຄໍາສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ;

2. ຈັບຕົວ, ກັກຂັງ ຫຼື ກວດຄົ້ນເຄຫະສະຖານ ໂດຍບໍ່ມີຄໍາສັ່ງ ຂອງຫົວໜ້າອົງການໄອຍະການ ຫຼື ສານ;

3. ກັກຕົວ, ຈັບຕົວ, ກັກຂັງ, ກວດຄົ້ນເຄຫະສະຖານ ຫຼື ຕົວບຸກຄົນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ການກັກຂັງເກີນກໍານົດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ຫຼື ບໍ່ຖືກຕ້ອງຕາມຄໍາຕັດສິນຂອງສານ;

4. ການໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທຸບຕີ ຫຼື ທໍລະມານ ຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈໍາເລີຍ ໃນເວລາດໍາເນີນຄະດີ;

5. ອອກຄໍາສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄໍາສັ່ງພາຕົວ, ຄໍາສັ່ງກັກຕົວ, ຄໍາສັ່ງຄຸມຕົວຢູ່ກັບທີ່, ຄໍາສັ່ງຍຶດ ຫຼື ອາຍັດຊັບ, ຄໍາສັ່ງປ່ອຍຕົວຜູ້ຖືກສົງໄສທີ່ຖືກກັກຕົວ, ຄໍາສັ່ງໂຈະ ຫຼື ຊັດມ້ຽນຄະດີອາຍາ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

6. ການອອກຄໍາສັ່ງກັກຕົວ ແຕ່ຄໍາສັ່ງດັ່ງກ່າວ ຖືກລຶບລ້າງໂດຍຄໍາສັ່ງຂອງອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ ທີ່ບົ່ງວ່າ ບຸກຄົນທີ່ຖືກກັກຕົວນັ້ນ ບໍ່ໄດ້ກະທໍາອັນໃດ ທີ່ເປັນການກະທໍາຜິດ ຫຼື ເປັນການລະເມີດກົດໝາຍ;

7. ອອກສັ່ງເປີດການສືບສວນ-ສອບສວນຕໍ່ຜູ້ຖືກຫາ ແຕ່ອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ ບໍ່ສັ່ງຟ້ອງຄະດີຂຶ້ນສານ ຫຼື ຊັດມ້ຽນຄະດີ ຍ້ອນຜູ້ຖືກກ່າວບໍ່ໄດ້ກະທໍາຜິດທາງອາຍາ.

ລັດ ຈະຊົດເຊີຍຄ່າເສຍຫາຍທີ່ເກີດຈາກການດໍາເນີນຄະດີອາຍາ ຂອງອົງການໄອຍະການປະຊາຊົນ ໃນກໍລະນີ ດັ່ງນີ້:

1. ອອກຄໍາສັ່ງ ປ່ຽນແປງ ຫຼື ລຶບລ້າງ ຄໍາສັ່ງເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ ຂອງອົງການສືບສວນ-ສອບສວນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

2. ອອກ ຫຼື ບໍ່ອອກຄໍາສັ່ງ ພາຕົວ, ກັກຕົວ, ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ປ່ອຍຕົວ, ຄຸມຕົວຢູ່ກັບທີ່, ງົດໜ້າທີ່ ຫຼື ຕໍາແໜ່ງ, ກວດຄົ້ນ, ຍຶດຊັບ, ອາຍັດຊັບ, ອອກຄໍາສັ່ງໂຈະ ຫຼື ຊັດມ້ຽນຄະດີອາຍາ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

3. ລຶບລ້າງ ຫຼື ບໍ່ລຶບລ້າງຄໍາສັ່ງ ຂອງອົງການສືບສວນ-ສອບສວນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

4. ບໍ່ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຕາມກໍານົດເວລາທີ່ໄດ້ກໍານົດໄວ້ໃນກົດໝາຍ;

5. ບໍ່ອອກຄໍາສັ່ງຮື້ຟື້ນຄະດີອາຍາ ໃນກໍລະນີມີຂໍ້ມູນຫຼັກຖານໃໝ່ທີ່ສາມາດເຊື່ອຖືໄດ້ທາງດ້ານກົດໝາຍ;

6. ການຮັບຮອງການອອກຄໍາສັ່ງການຕໍ່ກໍານົດເວລາການກັກຕົວ ຂອງອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ແຕ່ບຸກຄົນທີ່ຖືກກັກຕົວ ບໍ່ມີການກະທໍາໃດ ທີ່ເປັນການລະເມີດກົດໝາຍ;

7. ການຮັບຮອງການອອກຄໍາສັ່ງກັກຂັງຂອງອົງການສືບສວນ-ສອບສວນ ຫຼື ອອກຄໍາສັ່ງຕໍ່ກໍານົດເວລາການກັກຂັງ ແລະ ຕໍ່ມາ ອົງການທີ່ກ່ຽວຂ້ອງໃນການດໍາເນີນຄະດີອາຍາ ອອກຄໍາຕົກລົງຢືນຢັນວ່າ ບຸກຄົນທີ່ຖືກກັກຂັງບໍ່ໄດ້ກະທໍາຜິດທາງອາຍາ;

8. ສານຂັ້ນຕົ້ນ ສົ່ງສໍານວນຄະດີ ເພື່ອໃຫ້ດໍາເນີນການສືບສວນ-ສອບສວນເພີ່ມເຕີມ ແລະ ຕໍ່ມາ ອົງການທີ່ມີສິດກ່ຽວຂ້ອງ ອອກຄໍາສັ່ງສິ້ນສຸດການສືບສວນ-ສອບສວນ ເນື່ອງຈາກວ່າບຸກຄົນທີ່ຖືກດໍາເນີນຄະດີບໍ່ໄດ້ກະທໍາຜິດທາງອາຍາ;

9. ອອກຄໍາສັ່ງຟ້ອງ ແຕ່ສານຂັ້ນຕົ້ນຕັດສິນວ່າ ຈໍາເລີຍເປັນຜູ້ບໍລິສຸດ ເນື່ອງຈາກວ່າບຸກຄົນທີ່ຖືກດໍາເນີນຄະດີບໍ່ໄດ້ກະທໍາຜິດທາງອາຍາ ແລະ ຄໍາຕັດສິນຂອງສານຂັ້ນຕົ້ນໃຊ້ໄດ້ຢ່າງເດັດຂາດ;

10. ສານຂັ້ນອຸທອນ ຢັ້ງຢືນຕາມຄໍາຕັດສິນຂອງສານຂັ້ນຕົ້ນວ່າ ຈໍາເລີຍ ເປັນຜູ້ບໍລິສຸດ;

11. ສານຂັ້ນລົບລ້າງ ຫຼື ຂັ້ນຮື້ຟື້ນ ຢັ້ງຢືນຕາມຄຳພິພາກສາຂອງສານຂັ້ນອຸທອນວ່າ ຈຳເລີຍເປັນຜູ້ບໍລິສຸດ.

ລັດ ຈະຊົດເຊີຍຄ່າເສຍຫາຍທີ່ເກີດຈາກການດຳເນີນຄະດີອາຍາ ຂອງສານປະຊາຊົນ ໃນກໍລະນີ ດັ່ງນີ້:

1. ສານປະຊາຊົນຂັ້ນຕົ້ນ ລົງຄຳຕັດສິນວ່າ ຈຳເລີຍ ເປັນຜູ້ກະທຳຜິດ ແຕ່ສານປະຊາຊົນຂັ້ນອຸທອນ ບໍ່ຢັ້ງຢືນເອົາຕາມຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນ ແລະ ພິພາກສາວ່າ ຈຳເລີຍເປັນຜູ້ບໍລິສຸດ ແລະ ຊົ້ນມ້ຽນຄະດີ;

2. ສານປະຊາຊົນ ໄດ້ລົງຄຳຕັດສິນ ຫຼື ພິພາກສາວ່າ ຈຳເລີຍ ເປັນຜູ້ກະທຳຜິດ ແຕ່ສານປະຊາຊົນຂັ້ນອຸທອນ, ຂັ້ນລົບລ້າງ ຫຼື ຂັ້ນຮື້ນຟື້ນ ບໍ່ຢັ້ງຢືນເອົາຕາມຄຳຕັດສິນ ຫຼື ຄຳພິພາກສາດັ່ງກ່າວ ແລ້ວສົ່ງໃຫ້ອົງການໄອຍະການປະຊາຊົນ ເພື່ອດຳເນີນການສືບສວນ-ສອບສວນຄືນໃໝ່, ພາຍຫຼັງການສືບສວນ-ສອບສວນຄືນໃໝ່ແລ້ວ ເຫັນວ່າ ຈຳເລີຍເປັນຜູ້ບໍລິສຸດ ແລະ ຊັດມ້ຽນຄະດີ;

3. ການລົງຄຳຕັດສິນວ່າ ຈຳເລີຍ ມີຄວາມຜິດ ແລະ ຄຳຕັດສິນນັ້ນ ໃຊ້ໄດ້ຢ່າງເດັດຂາດ ແຕ່ຕໍ່ມາ ໄດ້ມີການຮື້ຟື້ນຄະດີ ແລະ ສານປະຊາຊົນ ໄດ້ພິພາກສາວ່າຈຳເລີຍເປັນຜູ້ບໍລິສຸດ ແລະ ຊັດມ້ຽນຄະດີ.

## ມາດຕາ 31 ຄ່າເສຍຫາຍຈາກການດຳເນີນຄະດີແພ່ງ

ລັດ ຈະຊົດເຊີຍຄ່າເສຍຫາຍທີ່ເກີດຈາກການດຳເນີນຄະດີແພ່ງ ໃນກໍລະນີ ດັ່ງນີ້:

1. ນຳໃຊ້ມາດຕະການຮັບປະກັນການຮ້ອງຟ້ອງ ໂດຍບໍ່ຖືກຕ້ອງຕາມກົດໝາຍ ເປັນຕົ້ນ ການ ຍຶດ ຫຼື ອາຍັດຊັບຂອງຄູ່ຄວາມ; ການບໍ່ອະນຸຍາດໃຫ້ຄູ່ຄວາມ ເຄື່ອນໄຫວ ຫຼື ກະທຳສິ່ງໃດໜຶ່ງ ທີ່ກ່ຽວຂ້ອງກັບຄະດີ, ບໍ່ອະນຸຍາດໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນໃດໜຶ່ງ ທີ່ພົວພັນໃນຄະດີກັບຜູ້ອື່ນ, ການຈຳກັດບໍລິເວນຕໍ່ຄູ່ຄວາມ;

2. ນຳໃຊ້ມາດຕະການຮີບດ່ວນຊົ່ວຄາວ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

3. ນຳໃຊ້ມາດຕະການຮີບດ່ວນທີ່ບໍ່ຖືກຕ້ອງຕາມກົດໝາຍ ດ້ວຍຕົວເອງ;

4. ນຳໃຊ້ມາດຕະການຮີບດ່ວນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຕາມຮ້ອງຂໍຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

5. ນຳໃຊ້ມາດຕະການຮີບດ່ວນເກີນກວ່າການຮ້ອງຂໍຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

6. ນຳໃຊ້ມາດຕະການຮີບດ່ວນ ບໍ່ຖືກຕ້ອງຕາມກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ນຳໃຊ້ມາດຕະການຮີບດ່ວນ ໂດຍບໍ່ມີເຫດຜົນພຽງພໍ;

7. ການອອກຄຳຕັດສິນ ຫຼື ຄຳຕົກລົງທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ແຕ່ຖືກອົງການທີ່ມີສິດອຳນາດ ພິຈາລະນາວ່າເປັນການລະເມີດກົດໝາຍ ຊຶ່ງຜູ້ອອກຄຳຕັດສິນ ຫຼື ຄຳຕົກລົງນັ້ນ ໄດ້ຖືກລົງວິໄນ ຫຼື ຖືກຕັດສິນວ່າ ເປັນຜູ້ກະທຳຜິດທາງອາຍາ;

8. ເພີ່ມ, ປ່ຽນແປງ, ລົບລ້າງ ຫຼື ທຳລາຍເອກະສານ, ຫຼັກຖານ ຫຼື ສິ່ງອື່ນ ທີ່ນຳໄປສູ່ການອອກຄຳຕັດສິນທີ່ຜິດພາດ ຫຼື ຕັດສິນທີ່ບໍ່ຖືກຕ້ອງຕາມກົດໝາຍ;

9. ການເກັບເງິນວາງສານ, ຄ່າທຳນຽມສານ ແລະ ການນຳໃຊ້ເງິນວາງສານ ແລະ ຄ່າທຳນຽມສານ ໂດຍບໍ່ຖືກຕ້ອງຕາມກົດໝາຍ.

## ມາດຕາ 32 ຄ່າເສຍຫາຍຈາກການປະຕິບັດຄຳຕັດສິນທາງອາຍາ

ລັດ ຈະຊົດເຊີຍຄ່າເສຍຫາຍທີ່ເກີດຈາກການຈັດຕັ້ງປະຕິບັດຄຳຕັດສິນທາງອາຍາ ໃນກໍລະນີ ດັ່ງນີ້:

1. ກົດໜ່ວງຖ່ວງດຶງ, ເຂົ້າຂ້າງອອກຂາ, ເລືອກຈັດຕັ້ງປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;

2. ເມີນເສີຍ, ລະເລີຍ ແລະ ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານ;

3. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ;

4. ຮັບສິນບົນ;

5. ອອກຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງໃຫ້ພາຕົວ, ຄຳສັ່ງປັບໃໝ ຫຼື ສະເໜີຕໍ່ເຈົ້າໜ້າທີ່ຕຳຫຼວດ ມີມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານໂດຍບໍ່ຖືກຕ້ອງຕາມກົດໝາຍ;

6. ການປະຕິບັດໂທດປະຫານຊີວິດ ຕໍ່ຜູ້ທີ່ບໍ່ໄດ້ຖືກປະຕິບັດໂທດປະຫານຊີວິດ;

7. ການກັກຂັງຜູ້ທີ່ຖືກລົງໂທດຕັດອິດສະລະພາບ ເກີນກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສິນ ຫຼື ຄຳຕົກລົງຂອງສານ;

8. ລະເວັ້ນການປະຕິໂທດ ຕໍ່ຜູ້ທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບ;

9. ໂຈະ ຫຼື ຜ່ອນໂທດ ຕໍ່ຜູ້ຖືກປະຕິບັດໂທດຕັດອິດສະລະພາບ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

10. ປ່ອຍຕົວກ່ອນກຳນົດ ໂດຍມີເງື່ອນໄຂ ຕໍ່ຜູ້ຖືກປະຕິບັດໂທດຕັດອິດສະລະພາບ ໂດຍບໍ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 33 ຄ່າເສຍຫາຍຈາກການປະຕິບັດຄຳຕັດສິນຄະດີແພ່ງ**

ລັດ ຈະຊົດເຊີຍຄ່າເສຍຫາຍທີ່ເກີດຈາກການຈັດຕັ້ງປະຕິບັດຄຳຕັດສິນທາງແພ່ງ ໃນກໍລະນີ ດັ່ງນີ້:

1. ອອກ ຫຼື ບໍ່ອອກຄຳຕົກລົງໃດໜຶ່ງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ດັ່ງນີ້:
   - ການປະຕິບັດຄຳຕັດສິນ;
   - ການຍົກເລີກ, ການແກ້ໄຂ ແລະ ການປ່ຽນແປງຄຳຕົກລົງການປະຕິບັດຄຳຕັດສິນຂອງສານ;
   - ໃຊ້ມາດຕະການເພື່ອຮັບປະກັນການປະຕິບັດຄຳຕັດສິນ;
   - ການບັງຄັບການປະຕິບັດຄຳຕັດສິນຂອງສານ;
   - ລະເວັ້ນການປະຕິບັດຄຳຕັດສິນຂອງສານ;
   - ໂຈະ ຫຼື ຍົກເລີກ ການປະຕິບັດຄຳຕັດສິນຂອງສານ;
   - ສືບຕໍ່ການປະຕິບັດຄຳຕັດສິນຂອງສານ.

2. ການຈັດຕັ້ງປະຕິບັດ ຫຼື ບໍ່ຈັດຕັ້ງການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ຂໍ້ 1 ຂອງມາດ ຕານີ້ ໂດຍບໍ່ຖືກຕ້ອງຕາມກົໝາຍ.

**ມາດຕາ 34 ການປະຕິເສດການຊົດເຊີຍຄ່າເສຍຫາຍ**

ອົງການຊົດເຊີຍຄ່າເສຍຫາຍ ຈະປະຕິເສດການຊົດເຊີຍຄ່າເສຍຫາຍທີ່ເກີດຈາກການດຳເນີນຄະດີ ໃນກໍລະນີມີສາເຫດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍ ແລະ ອົງການຊົດເຊີຍຄ່າເສຍຫາຍຈາກການດຳເນີນຄະດີ

**ມາດຕາ 35 ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍຈາກການດຳເນີນຄະດີ**

ຜູ້ຮ້ອງຂໍການຊົດເຊີຍຄ່າເສຍຫາຍຈາກການດຳເນີນຄະດີ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຄວາມເສຍຫາຍທາງດ້ານວັດຖຸ ແລະ ຈິດໃຈ ທີ່ເກີດຈາກການດຳເນີນຄະດີ ເປັນຕົ້ນ ການກັກຕົວ, ຈັບຕົວ, ກັກຂັງ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ການກັກຂັງເກີນກຳນົດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ບໍ່ຖືກຕ້ອງຕາມຄຳຕັດສິນຂອງສານ.

**ມາດຕາ 36 ອົງການຊົດເຊີຍຄ່າເສຍຫາຍຈາກການດຳເນີນຄະດີ**

ອົງການຊົດເຊີຍຄ່າເສຍຫາຍທີ່ເກີດຈາກການດຳເນີນຄະດີ ມີ ດັ່ງນີ້:

1. ອົງການສືບສວນ-ສອບສວນ;
2. ອົງການໄອຍະການປະຊາຊົນ;
3. ສານປະຊາຊົນ;
4. ອົງການປະຕິບັດຄຳຕັດສິນຂອງສານຄະດີອາຍາ;
5. ອົງການປະຕິບັດຄຳຕັດສິນຂອງສານຄະດີແພ່ງ.

## ໝວດທີ 3
## ຂັ້ນຕອນການແກ້ໄຂການຊົດເຊີຍຄ່າເສຍຫາຍຈາກການດຳເນີນຄະດີ

**ມາດຕາ 40 ການຮ້ອງຂໍການຊົດເຊີຍຄ່າເສຍຫາຍຈາກການດຳເນີນຄະດີ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກເຫັນວ່າຕົນ ໄດ້ຮັບຄວາມເສຍຫາຍ ເນື່ອງຈາກການດຳເນີນຄະດີ ມີສິດຍື່ນຄຳຮ້ອງຂໍ ພ້ອມດ້ວຍເອກະສານປະກອບ ຕໍ່ອົງການດຳເນີນຄະດີອາຍາ ພາຍໃນກຳນົດເວລາ ສາມປີ ນັບແຕ່ວັນຜູ້ຮ້ອງຂໍ ໄດ້ຮັບເອກະສານທີ່ເປັນບ່ອນອີງໃນການຮ້ອງຂໍການຊົດເຊີຍຄ່າເສຍຫາຍ ເປັນຕົ້ນໄປ.

**ມາດຕາ 41 ເອກະສານປະກອບການຮ້ອງຂໍການຊົດເຊີຍຄວາມເສຍຫາຍຕໍ່ອົງການດຳເນີນຄະດີອາຍາ**

ເອກະສານປະກອບ ການຮ້ອງຂໍການຊົດເຊີຍຄ່າເສຍຫາຍຕໍ່ອົງການດຳເນີນຄະດີອາຍາ ໃນກໍລະນີຜູ້ຖືກເສຍຫາຍຮ້ອງຂໍການຊົດເຊີຍໂດຍກົງ ມີ ດັ່ງນີ້:

1. ໃບຄຳຮ້ອງ;
2. ເອກະສານທີ່ເປັນພື້ນຖານສຳລັບການຮຽກຮ້ອງ (ຖ້າມີ);
3. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວຂອງຜູ້ຖືກເສຍຫາຍ;
4. ຫຼັກຖານ ຫຼື ເອກະສານ ທີ່ກ່ຽວຂ້ອງກັບການຮ້ອງຂໍ (ຖ້າມີ).

ໃນກໍລະນີຜູ້ຮ້ອງຂໍການຊົດເຊີຍ ເປັນຜູ້ສືບທອດ ຫຼື ເປັນຜູ້ຕາງໜ້າຂອງຜູ້ຖືກເສຍຫາຍ ນອກຈາກເອກະສານຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ແລ້ວ ຍັງຕ້ອງມີເອກະສານ ດັ່ງນີ້:

1. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວຂອງຜູ້ສືບທອດ ຫຼື ຜູ້ຕາງໜ້າ;
2. ໃບມອບສິດຂອງຜູ້ຖືກເສຍຫາຍ;
3. ໃບຢັ້ງຢືນການສືບທອດ ໃນກໍລະນີຜູ້ຖືກເສຍຫາຍ ຫາກເສຍຊີວິດ.

ໃບຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ນາມສະກຸນ ແລະ ທີ່ຢູ່, ເບີໂທລະສັບ ຂອງຜູ້ຮ້ອງຂໍຊົດເຊີຍຄ່າເສຍຫາຍ;
2. ວັນທີ, ເດືອນແລະປີຂອງການຮ້ອງຂໍລາຍລັກອັກສອນສຳລັບການຊົດເຊີຍ;
3. ການກະທຳທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຂອງຜູ້ປະຕິບັດໜ້າທີ່;
4. ສາຍພົວພັນ ລະຫວ່າງ ການກະທຳທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຂອງຜູ້ປະຕິບັດໜ້າທີ່ ແລະ ຄວາມເສຍຫາຍ;
5. ຂອບເຂດຄວາມເສຍຫາຍ ແລະ ມູນຄ່າຊົດເຊີຍຄ່າເສຍຫາຍທີ່ຮ້ອງຂໍ;
6. ລະດັບຄວາມເສຍຫາຍ, ການຄິດໄລ່ ແລະ ການຮ້ອງຂໍ;
7. ການຮ້ອງຂໍຄ່າຊົດເຊີຍລ່ວງໜ້າ(ຖ້າມີ);
8. ການສະເໜີອົງການຊົດເຊີຍເພື່ອເກັບກຳເອກະສານ ທີ່ເປັນພື້ນຖານໃຫ້ແກ່ການຊົດເຊີຍຄວາມເສຍຫາຍ ແຕ່ຕ້ອງກຳນົດແຈ້ງ ກ່ຽວກັບເອກະສານ ແລະ ສະຖານທີ່ເກັບກຳເອກະສານດັ່ງກ່າວໃນກໍລະນີທີ່ຜູ້ຮ້ອງຂໍ ບໍ່ສາມາດເກັບກຳເອກະສານດ້ວຍຕົນເອງໄດ້;
9. ການຮ້ອງຂໍໃຫ້ຟື້ນຟູກ່ຽວກັບກຽດສັກສີ, ສິດ ແລະ ຜົນປະໂຫຍດອັນຊອບທຳ(ຖ້າມີ).

**ມາດຕາ 42 ການພິຈາລະນາ, ກວດກາຢັ້ງຢືນຄວາມເສຍຫາຍ**

ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍການຊົດເຊີຍຄ່າເສຍຫາຍ ອົງການດຳເນີນຄະດີອາຍາ ຕ້ອງພິຈາລະນາ, ກວດກາຢັ້ງຢືນຄວາມເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນມາຕາດ 16 ແລະ 17 ຂອງກົດໝາຍສະບັບນີ້.

**ມາດຕາ 43 ການເຈລະຈາ ແລະ ຕົກລົງແກ້ໄຂການຊົດເຊີຍຄວາມເສຍຫາຍ**

ພາຍຫຼັງທີ່ໄດ້ພິຈາລະນາ, ກວດກາຢັ້ງຢືນຄວາມເສຍຫາຍແລ້ວ ຫາກເຫັນວ່າ ຄວາມເສຍຫາຍດັ່ງກ່າວ ຢູ່ໃນຄວາມຮັບຜິດຊອບການຊົດເຊີຍຄວາມເສຍຫາຍຂອງຕົນ ອົງການດຳເນີນຄະດີ ຕ້ອງເຈລະຈາ ແລະ ຕົກລົງແກ້ໄຂການຊົດເຊີຍຄວາມເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ແລະ 19 ຂອງກົດໝາຍສະບັບນີ້.

**ມາດຕາ 44 ການລົບລ້າງ, ການປ່ຽນແປງ ແລະ ເພີ່ມເຕີມ ການຕົກລົງແກ້ໄຂການຊົດເຊີຍຄ່າເສຍຫາຍ**

ການລົບລ້າງ, ການປ່ຽນແປງ ແລະ ເພີ່ມເຕີມ ການຕົກລົງແກ້ໄຂການຊົດເຊີຍຄ່າເສຍຫາຍ ໃຫ້ປະຕິບັດຄືກັນກັບ ການຕົກລົງແກ້ໄຂການຊົດເຊີຍຄ່າເສຍຫາຍໃນການຄຸ້ມຄອງບໍລິຫານລັດ ຕາມທີ່ໄດ້ກຳນົດໄວ້ໃນມາດ ຕາ 20 ຂອງກົດໝາຍສະບັບນີ້.

**ມາດຕາ 45 ການແກ້ໄຂຄຳຮ້ອງກ່ຽວກັບການຊົດເຊີຍຄ່າເສຍຫາຍຢູ່ສານປະຊາຊົນ**

ຜູ້ຖືກເສຍຫາຍ ຫາກບໍ່ພໍໃຈຕໍ່ການຄົ້ນຄວ້າກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຂອງອົງການຊົດເຊີຍຄ່າເສຍຫາຍຈາກການດຳເນີນຄະດີ ມີສິດຮ້ອງຂໍຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂຄືກັນກັບການແກ້

ໄຂຄຳຮ້ອງຂໍກ່ຽວກັບການຊົດເຊີຍຄ່າເສຍຫາຍຢູ່ສານປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຫາ 28 ຂອງກົດໝາຍສະບັບນີ້.

# ພາກທີ IV
# ງົບປະມານສຳລັບການຊົດເຊີຍຄວາມເສຍຫາຍ

**ມາດຕາ 46 ແຫຼ່ງງົບປະມານ**

ງົບປະມານທີ່ນຳໃຊ້ເຂົ້າໃນການຊົດເຊີຍຄ່າເສຍຫາຍຂອງລັດ ແມ່ນໄດ້ມາຈາກງົບປະມານຂອງລັດ.

**ມາດຕາ 47 ການຄາດຄະເນງົບປະມານ**

ກະຊວງ, ອົງການລັດ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ຕ້ອງຂຶ້ນແຜນງົບປະມານ ແລະ ຈັດສັນງົບປະມານເພື່ອຮັບໃຊ້ເຂົ້າໃນການຊົດເຊີຍຄ່າເສຍຫາຍ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃນແຕ່ລະປີ ຢ່າງລະອຽດ ແລ້ວນຳສະເໜີຕໍ່ອົງການທີ່ມີສິດອຳນາດພິຈາລະນາ.

**ມາດຕາ 48 ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ**

ພາຍຫຼັງທີ່ໄດ້ຮັບການອະນຸມັດງົບປະມານແລ້ວ ກະຊວງ, ອົງການລັດ ແລະ ອົງການປົກຄອງຂັ້ນທ້ອງຖິ່ນຕ້ອງນຳເອົາງົບປະມານດັ່ງກ່າວ ເຂົ້າເກັບໄວ້ໃນຄັງງົບປະມານ ຂັ້ນຂອງຕົນ.

ງົບປະມານທີ່ໄດ້ຮັບການອະນຸມັດ ຕ້ອງນຳໃຊ້ເຂົ້າໃນການຊົດເຊີຍຄ່າເສຍໃຫ້ແກ່ຜູ້ຖືກເສຍຫາຍ ໂດຍປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

# ພາກທີ V
# ຄວາມຮັບຜິດຊອບໃນການຊຳລະເງິນຄືນ

**ມາດຕາ 49 ພັນທະໃນການຊຳລະເງິນຄືນ ແລະ ການພິຈາລະນາຕໍ່ຜູ້ປະຕິບັດໜ້າທີ່ ທີ່ລະເມີດ**

ຜູ້ປະຕິບັດໜ້າທີ່ ທີ່ກໍ່ຄວາມເສຍຫາຍ ໂດຍເຈດຕະນາ ມີພັນທະຊຳລະເງິນຄືນເຂົ້າງົບປະມານຂອງລັດຕາມຈຳນວນທີ່ໄດ້ຈ່າຍໃຫ້ຜູ້ຖືກເສຍຫາຍ ຕາມຂໍ້ຕົກລົງກ່ຽວກັບການແກ້ໄຂການຊົດເຊີຍຄ່າເສຍຫາຍ ຂອງອົງການຊົດເຊີຍຄ່າເສຍຫາຍ ທີ່ກ່ຽວຂ້ອງ.

ຜູ້ປະຕິບັດໜ້າທີ່ ທີ່ກໍ່ຄວາມເສຍຫາຍໂດຍບໍ່ເຈດຕະນາ ຈະບໍ່ມີຄວາມຮັບຜິດຊອບຊຳລະເງິນຄືນ.

ນອກຈາກການຊຳລະເງິນຄືນ ຕາມຈຳນວນທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ຜູ້ປະຕິບັດໜ້າທີ່ຈະຖືກລົງວິໄນ ຫຼື ດຳເນີນຄະດີອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 ພື້ນຖານການກຳນົດມູນຄ່າການຊຳລະເງິນຄືນ**

ການກຳນົດມູນຄ່າການຊຳລະເງິນຄືນ ໃຫ້ອີງໃສ່ພື້ນຖານ ດັ່ງນີ້:

1. ລະດັບການກະທຳຜິດ;

2. ຈຳນວນເງິນທີ່ລັດໄດ້ຊົດເຊີຍ.

ຜູ້ປະຕິບັດໜ້າທີ່ຄົນດຽວ ສ້າງຄວາມເສຍຫາຍ ໃຫ້ປະຕິບັດດັ່ງນີ້:

1. ຜູ້ປະຕິບັດໜ້າທີ່ມີຄວາມຜິດ ໃນສະຖານການກະທຳຜິດໂດຍເຈດຕະນາ ໂດຍມີຄຳຕັດສິນຂອງສານ ຜູ້ປະຕິບັດໜ້າທີ່ ຕ້ອງໄດ້ຊຳລະເງິນຄືນທັງໝົດ ໃຫ້ລັດຕາມຈຳນວນເງິນທີ່ລັດໄດ້ຊົດເຊີຍ;

2. ຜູ້ປະຕິບັດໜ້າທີ່ ມີຄວາມຜິດໂດຍເຈດຕະນາ ຊຶ່ງກໍ່ຄວາມເສຍຫາຍ ແຕ່ບໍ່ເປັນການກະທຳຜິດທາງອາຍາ ຜູ້ປະຕິບັດໜ້າທີ່ ຕ້ອງໄດ້ຊຳລະເງິນຄືນໃຫ້ລັດ ສາມສິບ ຫາ ຫ້າສິບເດືອນ ຂອງເງິນເດືອນຜູ້ປະຕິບັດໜ້າທີ່ ແຕ່ຈຳນວນເງິນທັງໝົດ ບໍ່ເກີນ ຫ້າສິບສ່ວນຮ້ອຍ ຂອງຈຳນວນເງິນທີ່ລັດໄດ້ຊົດເຊີຍ;

3. ຜູ້ປະຕິບັດໜ້າທີ່ ມີຄວາມຜິດໂດຍບໍ່ເຈດຕະນາ ຊຶ່ງກໍ່ຄວາມເສຍຫາຍ ແຕ່ບໍ່ເປັນການກະທຳຜິດທາງອາຍາ ຜູ້ປະຕິບັດໜ້າທີ່ ຕ້ອງໄດ້ຊຳລະເງິນຄືນໃຫ້ລັດ ສາມ ຫາ ຫ້າເດືອນ ຂອງເງິນເດືອນຂອງຜູ້ປະຕິບັດໜ້າທີ່ ແຕ່ຈຳນວນເງິນທັງໝົດ ບໍ່ເກີນ ຫ້າສິບສ່ວນຮ້ອຍ ຂອງຈຳນວນເງິນທີ່ລັດໄດ້ຊົດເຊີຍ;

4. ໃນກໍລະນີ ຫ້າສິບສ່ວນຮ້ອຍ ທີ່ລັດໄດ້ຊົດເຊີຍຕໍ່າກວ່າ ສາມສິບເດືອນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2 ຫຼື ຕໍ່າກວ່າ ສາມເດືອນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ຂອງມາດຕານີ້ ຈຳນວນເງິນທີ່ຜູ້ປະຕິບັດໜ້າທີ່ຕ້ອງຈ່າຍຄືນ ແມ່ນຫ້າສິບສ່ວນຮ້ອຍ ຂອງຈຳນວນເງິນທີ່ລັດໄດ້ຊົດເຊີຍ;

ຜູ້ປະຕິບັດໜ້າທີ່ຫຼາຍຄົນ ສ້າງຄວາມເສຍຫາຍ ຈຳນວນເງິນທີ່ຕ້ອງຈ່າຍຄືນຂອງແຕ່ລະຄົນ ໃຫ້ປະຕິບັດຄືດັ່ງທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕານີ້.

ຜູ້ປະຕິບັດໜ້າທີ່ ສາມາດຫຼຸດຜ່ອນການຊຳລະເງິນຄືນ ຖ້າຄົບເງື່ອນໄຂ ດັ່ງນີ້:

1. ແກ້ໄຂຜົນເສຍຫາຍທີ່ເກີດຂຶ້ນດ້ວຍຕົນເອງ;

2. ປະຕິບັດພັນທະໃນຂະບວນການການແກ້ໄຂການຊົດເຊີຍຄ່າເສຍຫາຍ ຢ່າງຄົບຖ້ວນ ແລະ ໄດ້ຊຳລະເງິນຄືນໃຫ້ລັດ ຢ່າງໜ້ອຍ ຫ້າສິບສ່ວນຮ້ອຍ ຂອງຈຳນວນເງິນທີ່ຕ້ອງຊຳລະຄືນ;

3. ມີຄວາມຫຍຸ້ງຍາກດ້ານເສດຖະກິດ ໂດຍມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ.

ຫົວໜ້າອົງການຮັບຜິດຊອບການຊົດເຊີຍຄ່າເສຍຫາຍ ເປັນຜູ້ພິຈາລະນາ ຕົກລົງກ່ຽວກັບການຫຼຸດຜ່ອນການຊຳລະເງິນຄືນ ແຕ່ສູງສຸດບໍ່ເກີດນ ສາມສິບສ່ວນຮ້ອຍຂອງຈຳນວນເງິນທັງໝົດທີ່ຕ້ອງຊຳລະຄືນ.

### ມາດຕາ 51 ການຕົກລົງກ່ຽວກັບການຊຳລະເງິນຄືນ

ຫົວໜ້າອົງການຊົດເຊີຍຄ່າເສຍຫາຍ ເປັນຜູ້ມີສິດຕົກລົງກ່ຽວກັບການຊຳລະເງິນຄືນ.

ການຊຳລະເງິນຄືນ ອາດຈ່າຍເທື່ອດຽວ, ເປັນງວດ ຫຼື ເດືອນ ຕາມແຕ່ກໍລະນີ.

ໃນກໍລະນີ ຜູ້ປະຕິບັດໜ້າທີ່ ເສຍຊີວິດ ການຊຳລະເງິນຄືນ ໃຫ້ຢຸດ ນັບແຕ່ວັນຜູ້ປະຕິບັດໜ້າທີ່ເສຍຊີວິດເປັນຕົ້ນໄປ.

ໃນກໍະລນີ ຜູ້ປະຕິບັດໜ້າທີ່ ຮັບບຳນານ ອົງການປະກັນສັງຄົມ ທີ່ໄດ້ຈ່າຍເງິນຊົດເຊີຍແທນຜູ້ປະຕິບັດໜ້າທີ່ນັ້ນ ຕ້ອງເກັບເງິນນຳຜູ້ກ່ຽວໃຫ້ຄົບຕາມຈຳນວນ.

ໃນກໍລະນີ ຜູ້ປະຕິບັດໜ້າທີ່ ຖືກລົງວິໄນໄລ່ອອກການ ອົງການຊົດເຊີຍຄ່າເສຍຫາຍ ມີໜ້າທີ່ໃນການເກັບເງິນຊົດເຊີຍນຳຜູ້ກ່ຽວໃຫ້ຄົບຕາມຈຳນວນ.

**ມາດຕາ 52 ການອຸທອນ ຫຼື ຮ້ອງຟ້ອງຕໍ່ສານ ກ່ຽວກັບການຕົກລົງການຊໍາລະເງິນຄືນ**

ຜູ້ປະຕິບັດໜ້າທີ່ ທີ່ຮັບຜິດຊອບຊໍາລະເງິນຄືນນັ້ນ ຫາກບໍ່ພໍໃຈກັບການຕົກລົງກ່ຽວກັບການຊໍາລະເງິນຄືນ ມີສິດຂໍອຸທອນຄໍາຕົກລົງ ຫຼື ຮ້ອງຟ້ອງຕໍ່ສານ.

**ມາດຕາ 53 ການຄຸ້ມຄອງ ແລະ ນໍາໃຊ້ເງິນທີ່ໄດ້ຈາກການຊໍາລະຄືນ**

ອົງການຊົດເຊີຍຄ່າເສຍຫາຍ ຈະນໍາເອົາເງິນທີ່ໄດ້ຮັບຈາກການຊໍາລະຄືນທັງໝົດ ມອບເຂົ້າງົບປະມານຂອງລັດທັນທີ. ການຄຸ້ມຄອງ ແລະ ນໍາໃຊ້ເງິນທີ່ໄດ້ຮັບຈາກການຊໍາລະຄືນນັ້ນ ຕ້ອງສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 54 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກໍາ ດັ່ງນີ້:

1. ແຊກແຊງ ແລະ ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ໃນການພິຈາລະນາ ແກ້ໄຂຄວາມເສຍຫາຍ;
2. ປົກປິດ, ເຊື່ອງອໍາ ຫຼື ທໍາລາຍ ຂໍ້ມູນ, ຫຼັກຖານ ກ່ຽວກັບຄວາມເສຍຫາຍ;
3. ນາບຂູ່ ຫຼື ທໍາຮ້າຍ ພະນັກງານ ແລະ ເຈົ້າໜ້າທີ່, ພະຍານ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງກັບການຊົດເຊີຍຄວາມເສຍຫາຍ;
4. ປົກປ້ອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ລະເມີດກົດໝາຍ;
5. ໃຫ້ສິນບົນ ພະນັກງານ ແລະ ເຈົ້າໜ້າທີ່;
6. ໝິ່ນປະໝາດ,ໃສ່ຮ້າຍພະນັກງານ ແລະ ເຈົ້າໜ້າທີ່;
7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 55 ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ຕໍາແໜ່ງ, ໜ້າທີ່, ສິດອໍານາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
2. ປະຕິບັດສິດ, ໜ້າທີ່ ເກີນຂອບເຂດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;
3. ບັງຄັບ ແລະ ນາບຂູ່ ຜູ້ຖືກເສຍຫາຍ;
4. ເມີນເສີຍຕໍ່ໜ້າທີ່, ບິດເບືອນ, ປິດບັງຄວາມຈິງ, ຊຸກເຊື່ອງ ຫຼື ທາລາຍ ເອກະສານ ແລະ ຫຼັກຖານ ກ່ຽວກັບຄວາມເສຍຫາຍທີ່ເກີດຂຶ້ນ;
5. ກັກສໍານວນ, ກົດໜ່ວງເອກະສານຮ້ອງຂໍການຊົດເຊີຍ;
6. ທວງ, ຮຽກ, ຮັບ, ເອົາສິນບົນ ຈາກຜູ້ຮ້ອງຂໍການຊົດເຊີຍ ຫຼື ຈາກບຸກຄົນ , ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ;
7. ເປີດເຜີຍຄວາມລັບທາງລັດຖະການ;

8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 56 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 57 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ຖືກລົງໂທດ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 58 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 59 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດໍາລັດປະກາດໃຊ້ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**